**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

**ບໍລິສັດ ດັກລັກ ຣັບເບີ ຈຳກັດ**

**DAKLAORUCO** *ປາກເຊ, ວັນທີ 25 ເມສາ 2023*

# ຄຳໝັ້ນສັນຍາ

## ວ່າດ້ວຍການຈັດຕັ້ງປະຕິບັດການຄຸ້ມຄອງປ່າໄມ້ແບບຍືນຍົງຕາມມາດຕະຖານ FSC

ພາຍຫຼັງທີ່ໄດ້ສຶກສາ, ຮຽນຮູ້ກ່ຽວກັບ 10 ຫຼັກການຂອງມາດຕະຖານການຄຸ້ມຄອງປ່າໄມ້ແບບຍືນຍົງຂອງສະພາບໍລິຫານປ່າໄມ້ - FSC. ຄະນະອຳນວຍການ ແລະ ພະນັກງານກຳມະກອນທັງໝົດຂອງບໍລິສັດ ດັກລັກ ຣັບເບີ ຈຳກັດໃຫ້ຮູ້ວ່າ: ການຈັດຕັ້ງປະຕິບັດການຄຸ້ມຄອງປ່າໄມ້ແບບຍືນຍົງຕາມມາດຕະຖານ FSC ບໍ່ພຽງແຕ່ຮັບປະກັນປະສິດທິພາບທາງດ້ານເສດຖະກິດໃຫ້ແກ່ບໍລິສັດເທົ່ານັ້ນແຕ່ຍັງມີຄວາມໝາຍດ້ານສິ່ງແວດລ້ອມ ແລະ ສັງຄົມອັນໃຫຍ່ຫຼວງຕໍ່ຊຸມຊົນທ້ອງຖິ່ນອີກດ້ວຍ. ຄະນະອຳນວຍການ ແລະ ຜູ້ອອກແຮງງານທັງມົດຂອງ ບໍລິສັດ ດັກລັກ ຣັບເບີ ຈຳກັດ:

## ສັນຍາວ່າ

1. ຈັດຕັ້ງການຮຽນການສອນໃຫ້ແກ່ພະນັກງານກຳມະກອນໃນບໍລິສັດ; ໂຄສະນາເຜີຍແຜ່ໃຫ້ປະຊາຊົນໃນເຂດດັ່ງກ່າວເຂົ້າໃຈ ແລະ ປະຕິບັດຕາມລະບຽບການຂອງມາດຕະຖານ FSC ແລະ ກົດໝາຍອື່ນໆທີ່ກ່ຽວຂ້ອງຂອງລັດ.
2. ໃຫ້ຄຳໝັ້ນສັນຍາໃນການຈັດຕັ້ງປະຕິບັດລະບຽບການໃນມາດຕະຖານການຄຸ້ມຄອງປ່າໄມ້ແບບຍືນຍົງ FSC ຢ່າງຄົບຖ້ວນ ແລະ ຍາວນານ. ຈັດຕັ້ງປະຕິບັດແຜນການປະຈຳປີເຊັ່ນ: ແຜນການປູກປ່າ, ການຂຸດຄົ້ນປ່າໄມ້ (ຢາງ ແລະ ໄມ້), ການເງິນ, ແຮງງານ ແລະ ອື່ນໆ ຕາມແຜນການຄຸ້ມຄອງປ່າໄມ້ ແລະ ມາດຕະຖານ FSC ແຕ່ປີ 2023.
3. ປະຕິບັດຕາມຄຳແນະນຳທັງຫມົດ,ຕິດຕາມກວດກາກະທັນຫັ້ນແລະປະຈຳປີຂອງອົງການຢັ້ງຢືນປ່າໄມ້ທີ່ໄດ້ຮັບການມອບສິດ ແລະ FSC ສາກົນ.

ຄຳໝັ້ນສັນຍາສະບັບນີ້ໄດ້ຮັບຮອງໂດຍກອງປະຊຸມຜູ້ອອກແຮງງານຂອງບໍລິສັດ ດັກລັກ ຣັບເບີ ຈຳກັດ ໃນວັນທີ 25 ເມສາ 2023 ແລະ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນເອກະສັນຈາກພະນັກງານກຳມະກອນທັງໝົດຂອງບໍລິສັດ./.

| **ປະທານສະຫາພັນກຳມະບານ** | **ຜູ້ອຳນວຍການບໍລິສັດ** |
|---|---|
| **PhoneThida Theppannha** | *Nguyễn Đức Hạnh* |